ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----------------------------------

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 2387 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 15 DEC 2011

# ຂໍ້ຕົກລົງ

## ວ່າດ້ວຍການມອບສິດໃຫ້ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າປະເພດທີ່ໄດ້ຮັບສິດທິພິເສດດ້ານການຄ້າ.

- ອີງໃສ່ດຳລັດເລກທີ 228/ນຍ ລົງວັນທີ 22 ເມສາ 2010 ວ່າດ້ວຍແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ.
- ອີງໃສ່ໃບສະເໜີຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ສະບັບເລກທີ 0937/ສຄອ ລົງວັນທີ 17 ສິງຫາ 2010, ເລກທີ 1383/ສຄອ ລົງວັນທີ 24 ທັນວາ 2010, ເລກທີ 1511/ສຄອ ລົງວັນທີ 31 ພຶດສະພາ 2011.
- ອີງໃສ່ບົດລາຍງານກ່ຽວກັບຜົນຂອງກອງປະຊຸມປຶກສາຫາລືກ່ຽວກັບຂັ້ນຕອນການມອບ CO, ງານວາງສະແດງສິນຄ້າໃຫ້ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ສະບັບເລກທີ 1196/ທອຄ ລົງວັນທີ 3 ມິຖຸນາ 2011.
- ອີງໃສ່ການຄົ້ນຄວ້າດ້ານວິຊາການຂອງກົມກ່ຽວຂ້ອງ.

## ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ການຄ້າອອກຂໍ້ຕົກລົງ:

ມາດຕາ 1. ມອບສິດໃຫ້ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າປະເພດທີ່ໄດ້ຮັບສິດທິພິເສດດ້ານການຄ້າເຊັ່ນ: Form AK, Form CO Korea, Form E, Form SPT, Form AANZ, ແລະ Form AJ ນັບແຕ່ວັນທີ 1 ກໍລະກົດ 2012 ເປັນຕົ້ນໄປ. ສ່ວນຟອມອື່ນໆນອກຈາກນີ້ ແມ່ນກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຮັບຜິດຊອບໃນການອອກ ແລະ ຄຸ້ມຄອງ ຕາມພາລະບົດບາດ ແລະ ລະບຽບການຂອງຜູ້ໃຫ້ສິດທິພິເສດດ້ານການຄ້າກຳນົດໄວ້.

ມາດຕາ 2. ໃຫ້ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຈັດຕັ້ງປະຕິບັດການອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແຕ່ລະຊະນິດຟອມ ຕາມທີ່ໄດ້ມອບໝາຍໃຫ້ໃນມາດຕາ 1 ຂ້າງເທິງນີ້ຢ່າງເປັນເອກະພາບ ນັບແຕ່ຂັ້ນສູນກາງ ເຖິງຂັ້ນແຂວງ ແລະ ນະຄອນຫຼວງ.

ມາດຕາ 3. ການອອກຟອມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຕ້ອງປະຕິບັດຕາມເງື່ອນໄຂ ແລະ ຂໍ້ກຳນົດຕ່າງໆ ເພື່ອຢັ້ງຢືນການໄດ້ເງື່ອນໄຂແຫຼ່ງກຳເນີດສິນຄ້າ ທີ່ລະບຸໄວ້ໃນມາດຕາ 7,8,9 ແລະ 10 ຂອງດຳລັດເລກທີ 228/ນຍ ລົງວັນທີ 22 ເມສາ 2010 ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຂອງແຕ່ລະກອບສັນຍາທີ່ກ່ຽວຂ້ອງກັບແຕ່ລະຟອມ.

ມາດຕາ 4. ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນເຈົ້າການຮັບຜິດຊອບໃນການຄົ້ນຄວ້າອອກລະບຽບການເພື່ອຄຸ້ມຄອງວຽກງານດັ່ງກ່າວໃຫ້ຖືກຕ້ອງສອດຄ່ອງກັບນະໂຍບາຍ ແລະ ລະບຽບການຂອງບັນດາປະເທດຜູ້ໃຫ້ສິດທິພິເສດດ້ານການຄ້າແຕ່ລະກອບ ພ້ອມທັງຮັບຜິດຊອບໃນການອອກ, ການກວດກາຕິດຕາມການຈັດຕັ້ງປະຕິບັດໃຫ້ສອດຄ່ອງ ແລະ ຮັດກຸມ.

ມາດຕາ 5. ເພື່ອເປັນເອກະພາບໃນການປະຕິບັດຫຼັກການຄຸ້ມຄອງລັດ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຕ້ອງປະຕິບັດຫຼັກການສະເໝີພາບ, ໂປ່ງໃສ, ເປັນທຳຕໍ່ທຸກໆຫົວໜ່ວຍທຸລະກິດສົ່ງອອກ, ປະຕິບັດໜ້າທີ່ໃນການເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດເລກທີ 03/ປປທ ລົງວັນທີ 19 ພະຈິກ 2008 ເພື່ອມອບເຂົ້າງົບປະມານຂອງລັດ ພ້ອມທັງສະຫຼຸບລາຍງານໃຫ້ກະຊວງຊາບເປັນແຕ່ລະໄລຍະ (ເດືອນ, ງວດ, ປີ).

ມາດຕາ 6. ກ່ອນການມອບໂອນ ໃຫ້ກົມການນຳເຂົ້າ ແລະ ສົ່ງອອກສົມທົບກັບພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງເພື່ອແຈ້ງ ແລະ ລຸລ່ວງເຫດຜົນທີ່ຕ້ອງມີການມອບໂອນວຽກງານດັ່ງກ່າວໃຫ້ສະພາການຄ້າ ແລະ ອຸດສາຫະກຳ ເປັນຜູ້ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ລະບຸໄວ້ໃນມາດຕາ 1 ພ້ອມທັງກະກຽມຈັດຕັ້ງການຝຶກອົບຮົມເພື່ອສ້າງບຸກຄະລາກອນທີ່ຈະຮັບຜິດຊອບການອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດັ່ງກ່າວນີ້ໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ທົ່ວເຖິງ.

ມາດຕາ 7. ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ, ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ສົມທົບກັບສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ແລະ ຫ້ອງການສະພາການຄ້າ ແລະ ອຸດສາຫະກຳ ຂອງແຂວງ, ນະຄອນຫຼວງ ຈັດຕັ້ງປະຕິບັດການມອບໂອນວຽກງານການອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຕົວຈິງ ໃຫ້ມີຜົນສຳເລັດ ແລະ ທັນກັບເວລາພ້ອມທັງແຈ້ງໃຫ້ບັນດາປະເທດ ແລະ ພາກສ່ວນກ່ຽວຂ້ອງຊາບຢ່າງທົ່ວເຖິງ ກ່ຽວກັບການມອບໂອນດັ່ງກ່າວ.

ມາດຕາ 8. ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ ວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ. ນາມ ວິຍະເກດ